ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບວັດ ທະນະຖາວອນ

ກະຊວງການເງິນ

ເລກທີ 0204 /ກງ

ນະຄອນຫຼວງວຽງຈັນ, ວັນທີ 15. ມັງກອນ 2019

# ຂໍ້ຕົກລົງ
## ວ່າດ້ວຍການອະນຸມັດນຳໃຊ້ລະບົບແຈ້ງພາສີປະຕູດຽວ

- ອີງຕາມ ດຳລັດນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງການເງິນ ສະບັບເລກທີ 144/ນຍ, ລົງວັນທີ 08 ພຶດສະພາ 2017.
- ອີງຕາມ ຂໍ້ຕົກລົງຂອງກະຊວງການເງິນວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວອົງການແຈ້ງພາສີປະຕູດຽວ ສະບັບເລກທີ 2019/ກງ, ລົງວັນທີ 26 ມິຖຸນາ 2015.
- ອີງຕາມ ສັນຍາສຳປະທານສ້າງຕັ້ງລະບົບແຈ້ງພາສີປະຕູດຽວລະຫວ່າງກະຊວງການເງິນ ແລະ ບໍລິສັດບົວໂຮເວີຣິຕັດສ໌ສະບັບລົງວັນທີ 28 ມັງກອນ 2013.
- ອີງຕາມ ບົດລາຍງານຂອງກົມພາສີ ສະບັບເລກທີ 07522/ກພສ, ລົງວັນທີ 04 ທັນວາ 2018, ສະບັບເລກທີ 08020/ກພສ, ວັນທີ 14 ທັນວາ 2018 ແລະ ສະບັບເລກທີ 00070/ກພສ, ວັນທີ 07 ມັງກອນ 2019.

ລັດຖະມົນຕີກະຊວງການເງິນ ຕົກລົງ:

**ມາດຕາ 1.** ໃຫ້ຈັດຕັ້ງປະຕິບັດລະບົບແຈ້ງພາສີປະຕູດຽວ (Lao National Single Window ຫຼື LNSW) ເຂົ້າໃນການຄຸ້ມຄອງການນຳເຂົ້າ ແລະ ສົ່ງອອກສິນຄ້າປະເພດຕ່າງໆ; ໂດຍໃຫ້ນຳໃຊ້ລະບົບດັ່ງກ່າວເຂົ້າໃນການຄຸ້ມຄອງການນຳເຂົ້າສິນຄ້າປະເພດພາຫະນະ ຢູ່ດ່ານພາສີສາກົນຂົວມິດຕະພາບ 1 ເປັນບາດກ້າວເລີ່ມຕົ້ນ. ພາຍຫຼັງມີການປັບປຸງ, ພັດທະນາ ແລະ ມີຜົນສຳເລັດໃນການຈັດຕັ້ງປະຕິບັດ ຈຶ່ງໃຫ້ສືບຕໍ່ຜັນຂະຫຍາຍການນຳໃຊ້ລະບົບໄປສູ່ບັນດາດ່ານພາສີສາກົນໃນຂອບເຂດທົ່ວປະເທດ.

**ມາດຕາ 2.** ໃຫ້ບັນດາຂະແໜງການລັດທີ່ກ່ຽວຂ້ອງ ອອກຄຳແນະນຳກ່ຽວກັບຂັ້ນຕອນການອອກໃບອະນຸຍາດ, ການອອກໃບຢັ້ງຢືນ ແລະ ການແຈ້ງພາສີທີ່ຕິດພັນກັບຄວາມຮັບຜິດຊອບຂອງຕົນເອງໃຫ້ກະທັດຮັດງ່າຍດາຍ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການ.

**ມາດຕາ 3.** ໃຫ້ຊຳລະຄ່າພາສີ, ຄ່າອາກອນ, ຄ່າທຳນຽມ, ຄ່າບໍລິການ ແລະ ພັນທະອື່ນ ທີ່ຕ້ອງມອບເຂົ້າງົບປະມານ ລັດສຳລັບການນຳເຂົ້າ ແລະ ການສົ່ງອອກສິນຄ້າ, ເຄື່ອງຂອງ ແມ່ນໃຫ້ຊຳລະລວມສູນຈຸດດຽວຢູ່ດ່ານພາສີຊາຍແດນບ່ອນນຳເຂົ້າ ແລະ ສົ່ງອອກສິນຄ້າ ໂດຍຜ່ານລະບົບແຈ້ງພາສີປະຕູດຽວ (LNSW) ທີ່ເຊື່ອມໂຍງກັບລະບົບ ແຈ້ງພາສີດ້ວຍເອເລກໂຕຣນິກ (ASYCUDA) ແລະ ລະບົບຊຳລະເງິນຜ່ານທະນາຄານ (SmartTax).

**ມາດຕາ 4.** ໃຫ້ບໍລິສັດຮ່ວມພັດທະນາລະບົບແຈ້ງພາສີປະຕູດຽວ ຈັດເກັບຄ່າບໍລິການນຳໃຊ້ລະບົບດັ່ງກ່າວ ໃນອັດຕາ 120.000 (ໜຶ່ງແສນຊາວພັນ) ກີບ ຕໍ່ການແຈ້ງນຳເຂົ້າ-ສົ່ງອອກສິນຄ້າ 1 ຄັ້ງ ຕາມທີ່ກຳນົດໃນສັນຍາສຳປະທານໂຄງການດັ່ງກ່າວ ຊຶ່ງບໍ່ລວມເອົາຄ່າພາສີ, ຄ່າອາກອນ, ຄ່າທຳນຽມ ແລະ ຄ່າບໍລິການຂອງຂະແໜງການລັດກ່ຽວຂ້ອງ.

**ມາດຕາ 5.** ຂໍ້ຕົກລົງສະບັບນີ້ມີຜົນສັກສິດພາຍຫຼັງລົງລາຍເຊັນ ແລະ ພິມລົງໃນຈົດໝາຍເຫດທາງລັດຖະການ 15 ວັນ.

ລັດຖະມົນຕີກະຊວງການເງິນ

ສົມດີ ດວງດີ

Lao People's Democratic Republic
Peace Independence Democracy Unity Prosperity

----------------------------


| LNSW CO., LTD | |
| --- | --- |
| Ref:........................................ | |
| Date of Receipt | 15 JAN 2019 |
| Director General | |
| Finance & HR | |
| Operation | |
| Administrative | |
| Project | |


Ministry of Finance

No: 0204/ກງ

Vientiane capital, date: 15 Jan 2019

# Agreement on Validation of the Use of LNSW Platform

- Reference to the Decree of Prime Minister on Implementation and Activities of Finance Ministry No. 144/ນຍ, dated 08 May 2017;
- Reference to the Agreement of Finance Ministry on Organization and Activities of Single Window No. 2109/ກງ , dated 26 June 2015;
- Reference to the Concession Agreement on LNSW Establishment between Ministry of Finance and Bureau Veritas, Dated on 28 Jan 2013.
- Reference to Report of Customs No. 07522/ກພສ, dated 04 Dec 2018; and No. 08020/ ກພສ. Dated on 14 Dec 2018 and No. 00070/ກພສ. Dated on 07 Jan 2019;

**Minister of Finance agreed:**

**Article1:** LNSW platform is validated to be applied to import and export of goods management; this platform will be used to management of vehicle import at Friendship Bridge 1 International Customs Border checkpoint initially. After the improvement, development and success of such an implementation of the system, this will be expanded to other international customs border checkpoints across the country.

**Article2:** assign the associated public agencies issue an instruction on procedures of a permit and a certificate issuance and customs declaration related to its responsibilities simply and compliant with the associated law and regulations available

**Article3:** customs and duties, tax, fees, services fees and other obligation fees needed to present to public budge for import and export of goods will be paid at single point at arrival and departure customs border checkpoint via LNSW platform interfaced with ASYCUDA system and payment will be done via Smart-Tax system.

**Article4**: assign LNSW company collect service fee of 120.000 (one hundred and twenty thousand) kip per one transaction of import and export as determined in the Concession Agreement; which exclude payment of customs and duties, tax, fees and other public service fees.

**Article 5**: this agreement is effective after the signing date and put into the Lao Official Gazette in 15 days